# ຂະບວນການຂຶ້ນທະບຽນກະສິກຳອິນຊີ, ມາດຕະຖານ ເງື່ອນໄຂຕ່າງໆ ແລະ ຄ່າໃຊ້ຈ່າຍ.

ທ່ານ ນາງ ມິນທິດາ ສີສົມພູ
ພະແນກມາດຕະຖານ ແລະ ການຢັ້ງຢືນ, ກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້
ເບີໂທ: 021 412350, 020 2922 7755

# ໂຄງຮ່າງການຈັດຕັ້ງ ຂອງກົມປູກຝັງ

ກະຊວງກະສິກຳ ແລະ ປ່າໄມ້
ກົມປູກຝັງ
Department of Agriculture
DOA

**ກົມປູກຝັງ**

- ພະແນກບໍລິຫານ
- ພະແນກລະບຽບການ
- ພະແນກກັກກັນພືດ
- ສູນມາດຕະຖານກະສິກຳສະອາດ
- ສູນປ້ອງກັນພືດ
- ພະແນກແຜນການ ແລະ ການຮ່ວມມື
- ພະແນກລົງທຶນ ດ້ານການປູກຝັງ
- ພະແນກມາດຕະຖານ ແລະ ການຢັ້ງຢືນ
- ພະແນກຄຸ້ມຄອງການປຸງແຕ່ງ

**ຂະແໜງປູກຝັງ ແຂວງ**



ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

0078

ກະຊວງກະສິກຳ ແລະ ປ່າໄມ້

ເລກທີ:............./ກປ
ນະຄອນຫຼວງວຽງຈັນ, ວັນທີ 12 JAN 2022

ຂໍ້ຕົກລົງ
ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ
ຂອງກົມປູກຝັງ

- ອີງຕາມ ກົດໝາຍ ວ່າດ້ວຍການປ້ອງກັນ ແລະ ການກັກກັນພືດ ສະບັບເລກທີ 13/ສພຊ, ລົງວັນທີ 15 ພະຈິກ 2016;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 603 /ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ການຕົກລົງ ຂອງກອງປະຊຸມຄະນະປະຈຳພັກກະຊວງກະສິກຳ ແລະ ປ່າໄມ້, ຄັ້ງວັນທີ 30 ທັນວາ 2021.

ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ຕົກລົງ:

ມາດຕາ 12 ໜ້າທີ່ ຂອງພະແນກມາດຕະຖານ ແລະ ການຢັ້ງຢືນ
ພະແນກມາດຕະຖານ ແລະ ການຢັ້ງຢືນ ມີໜ້າທີ່ດັ່ງນີ້:

# ໂຄງຮ່າງການຈັດຕັ້ງຂອງພະແນກມາດຕະຖານ

**ຫົວໜ້າພະແນກ**
**Director**

- **ຮອງຫົວໜ້າພະແນກ 1**
  **Deputy Director**
- **ຮອງຫົວໜ້າພະແນກ 2**
  **Deputy Director**

- **ກຸ່ມວຽກ ກວດກາ ແລະ ຮັບຮອງ**
  **Accreditation**
- **ກຸ່ມວຽກກວດກາ ແລະ ຢັ້ງຢືນ**
  **Certification**
- **ກຸ່ມວຽກພັດທະນາມາດຕະຖານ**
  **Standard Development**


ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

0078 ເລກທີ:............/ກປ
ນະຄອນຫຼວງວຽງຈັນ, ວັນທີ 12 JAN 2022

ຂໍ້ຕົກລົງ
ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ
ຂອງກົມປູກຝັງ

- ອີງຕາມ ກົດໝາຍ ວ່າດ້ວຍການປ້ອງກັນ ແລະ ການກັກກັນພືດ ສະບັບເລກທີ 13/ສພຊ, ລົງວັນທີ 15 ພະຈິກ 2016;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 603 /ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ການຕົກລົງ ຂອງກອງປະຊຸມຄະນະປະຈຳພັກກະຊວງກະສິກຳ ແລະ ປ່າໄມ້, ຄັ້ງວັນທີ 30 ທັນວາ 2021.

ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ຕົກລົງ:

ມາດຕາ 12 ໜ້າທີ່ ຂອງພະແນກມາດຕະຖານ ແລະ ການຢັ້ງຢືນ
ພະແນກມາດຕະຖານ ແລະ ການຢັ້ງຢືນ ມີໜ້າທີ່ດັ່ງນີ້:

# ກະສິກຳສະອາດ

| | |
|---|---|
| ກະສິກຳທີ່ດີ GAP = Good Agriculture Practice | ສາມາດນຳໃຊ້ສານເຄມີໄດ້ແຕ່ຕ້ອງຢູ່ ໃນຂອບເຂດທີ່ກຳນົດໄວ້ |
| ກະສິກຳບໍ່ນຳໃຊ້ຢາສັດຕູພືດ PFP = Pesticide free production | ບໍ່ອະນຸຍາດນຳໃຊ້ຢາຂ້າແມງໄມ້ ຈາກເຄມີສັງ ເຄາະທຸກປະເພດ |
| ກະສິກຳອິນຊີ OA=Organic agriculture | ຫ້າມນຳໃຊ້ສານເຄມີສັງເຄາະທຸກປະເພດ |
| ກະສິກຳທຳມະຊາດ Traditional agriculture | ບໍ່ໄດ້ນຳໃຊ້ສານເຄມີ<br>ນຳໃຊ້ຝຸ່ນຄອກຝຸ່ນບົ່ມ<br>ມີການຈູດຫລືຖາງ |

# ການຜະລິດກະສິກຳອິນຊີແມ່ນຫຍັງ?

ລະບົບການຜະລິດກະສິກຳອິນຊີ → ແມ່ນການຜະລິດທີ່ບໍ່ນຳໃຊ້ສານເຄມີ

ລະບົບການຜະລິດກະສິກຳອິນຊີໄດ້ກວມເອົາ 4 ປັດສະຍາ

- ດ້ານສຸຂະພາບ: ສຸຂະພາບຄົນ, ສັດ ແລະ ສິ່ງແວດລ້ອມ
- ດ້ານຄວາມເປັນທຳ: ສິ່ງແວດລ້ອມ ແລະ ການດຳລົງຊີວິດ
- ດ້ານນິເວດ: ການອະນຸລັກຊີວະນາໆພັນ
- ຄວາມຫວ່າງໃຍ: ຍຸກປະຈຸບັນ ແລະ ຄົນຫຼຸ້ນຫລັງ

# ການຜະລິດກະສິກຳອິນຊີແມ່ນຫຍັງ?

1. ການໝູນວຽນຂອງທາດອາຫານ
2. ທາດອາຫານມີຄວາມສົມດຸນ
3.ມີຄວາມຫຼາກຫຼາຍຢ່າງສົມດຸນ
4.ອະນຸລັກແລະຟື້ນຟູນິເວດກະສິກຳ
5.ອາໃສກົນໄກທຳມະຊາດ
6.ເພິ່ງພາຕົນເອງດ້ານປັດໃຈການຜະລິດ











# ມາດຕະຖານກະສິກຳອິນຊີລາວ



ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງກະສິກຳ ແລະ ປ່າໄມ້
ຂໍ້ຕົກລົງ ຂອງ
ລັດຖະມົນຕີ ວ່າການ ກະຊວງກະສິກຳ ແລະ ປ່າໄມ້
ວ່າດ້ວຍ
ມາດຕະຖານກະສິກຳອິນຊີ

( ຈັດພິມໂດຍ: ກົມປູກຝັງ )
( ຈຳນວນ 5.000 ສະບັບ )
ວຽງຈັນ 2005

ສະໜັບສະໜູນໂດຍ ໂຄງການກະສິກຳອິນຊີ ( PROFIL)

ກະສິກຳ ອິນຊີລາວ
Laos Organic
CERTIFIED

- ມາດຕະຖານກະສິກຳອິນຊີ ແມ່ນວິທີການ ແລະ ຂໍ້ກຳນົດເງື່ອນໄຂການຜະລິດກະສິກຳອິນຊີໃນທຸກຂັ້ນຕອນ ເລີ່ມແຕ່ການປູກ, ຈົນຮອດຂັ້ນຕອນການປຸງແຕ່ງ, ການຈັດການ, ການເກັບຮັກສາ, ການຂົນສົ່ງ ແລະ ການເກັບກ່ຽວຜົນຜະລິດຈາກທຳມະຊາດ, ໂດຍປະຕິບັດຕາມມາດຕະຖານກະສິກຳອິນຊີ ຂອງ ສປປ ລາວ
- 9 ໝວດ 31 ມາດຕາ
- ເງື່ອນໄຂມາດຕະຖານ 92 ຂໍ້
- ເງື່ອນໄຂກຸ່ມ 44 ຂໍ້

# ມາດຕະຖານກະສິກຳອິນຊີ

- ຫຼັກການລວມ
- ລະບົບນິເວດພາຍໃນຟາມ
- ໄລຍະການປັບປ່ຽນ ຫຼື ໄລຍະຂ້າມຜ່ານ: ພືດລົ້ມລຸກ 12 ເດືອນ, ໄມ້ໃຫ້ໝາກ 18 ເດືອນ, ການຂໍຍົກເວັ້ນໄລຍະປັບປ່ຽນ
- ຊະນິດ ແລະ ແນະພັນພືດ
- ຄວາມຫຼາກຫຼາຍຂອງພືດພາຍໃນຟາມ
- ການປ້ອງກັນ ແລະ ການກຳຈັດສັດຕູພືດ
- ການປ້ອງກັນການປົນເປື້ອນ
- ການປຸງແຕ່ງ
- ການຫຸ້ມຫໍ່
- ຜູ້ຮັບຈ້າງການຜະລິດ
- ການໃຊ້ສະຫຼາກ ແລະ ກາໝາຍກະສິກຳອິນຊີລາວ: 95%, 70% ແລະ ໜ້ອຍກວ່າ 70% ແລະ ຜົນຜະລິດໄລນະປັບປ່ຽນ
- ເອກະສານຊ້ອນທ້າຍ

# ຂະບວນການອອກໃບຢັ້ງຢືນ




1. ການສະໝັກ
2. ການກວດກາ
3. ການຢັ້ງຢືນ
4. ການຕໍ່ອາຍຸການຢັ້ງຢືນ

# ຂະບວນການອອກໃບຢັ້ງຢືນ



# ໃບຢັ້ງຢືນ


ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງ ກະສິກຳ ແລະ ປ່າໄມ້
ກົມປູກຝັງ

ເລກທີ 1378---- /ກປຝ
ນະຄອນຫຼວງວຽງຈັນ, ວັນທີ 12 AUG 2021

ກະສິກຳ ອິນຊີລາວ
Laos Organic
CERTIFIED

ໃບຢັ້ງຢືນມາດຕະຖານກະສິກຳອິນຊີລາວ

ໃບຢັ້ງຢືນສະບັບນີ້ອອກໃຫ້ແກ່:

ສະຫະກອນກະສິກຳອິນຊີ ທົ່ງມັ່ງ

ທີ່ຢູ່: ບ້ານ ທົ່ງມັ່ງ, ເມືອງ ໄຊທານີ, ນະຄອນຫຼວງວຽງຈັນ.
ທີ່ຕັ້ງຂອງພື້ນທີ່ຜະລິດ: ບ້ານ ທົ່ງມັ່ງ, ເມືອງ ໄຊທານີ, ນະຄອນຫຼວງວຽງຈັນ.

ພືດທີ່ໄດ້ຮັບການຢັ້ງຢືນ: ພືດຜັກ ແລະ ໄມ້ກິນໝາກ.
ເນື້ອທີ່ທີ່ໄດ້ຮັບການຢັ້ງຢືນ: 42.68 ເຮັກຕາ.
ຜົນຜະລິດໄດ້ຮັບການຢັ້ງຢືນ: 54.3 ໂຕນ/ປີ (ກະສິກຳອິນຊີ 42.2 ເຮັກຕາ ແລະ ໄລຍະປັບປ່ຽນ 2.16 ເຮັກຕາ).
ລະຫັດຜູ້ປະກອບການ: LDOA 0010.

ໄດ້ຮັບຢັ້ງຢືນຕາມມາດຕະຖານກະສິກຳອິນຊີ ຂອງ ກະຊວງ ກະສິກຳ ແລະ ປ່າໄມ້, ສະບັບເລກທີ 1666/ກປ.ກປຝ, ປີ 2005.

ໃບຢັ້ງຢືນສະບັບນີ້ ສາມາດນຳໃຊ້ໄດ້ 2 ປີ ນັບແຕ່ວັນທີ 10/09/2020 ຫາ ວັນທີ 10/09/2022.

ຫົວໜ້າ ກົມປູກຝັງ

ບຸນຈັນ ກົມບຸນຍະສິດ


Laos People's Democratic Republic
Peace Independence Democracy Unity Prosperity

Ministry of Agriculture and Forestry
Department of Agriculture

Ref.No. 1378---- /DOA
Vientiane, dated 12 AUG 2021

Laos Organic
CERTIFIED

CERTIFICATE OF LAOS ORGANIC STANDARD

THIS CERTIFICATE IS AWARDED TO:

Thongmang Organic Agriculture Cooperatives

ADDRESS: Thongmang Village, Xaythany District , Vientiane Capital.
LOCATION OF FARM: Thongmang Village, Xaythany District , Vientiane Capital.

CERTIFIED CROP: Vegetables and Fruits.
CERTIFIED AREA: 42.68 Ha (Organic 40.2 Ha and In-Conventional 2.16 Ha).
CERTIFIED PRODUCTION: 54.3 Ton/Year.
OPRATOR CODE: LDOA 0010.

CERTIFYING ACCORDING TO ORGANIC STANDARD OF MINISTRY OF AGRICULTURE AND FORESTRY,REF.NO.1666/MAF.DOA, 2005.

This certificate is valid two year from the date 10/09/2020 to 10/09/2022.

Represent Director General
Department of Agriculture

Bounchanh KOMBOUNYASITH

ອາຍຸໃບຢັ້ງຢືນ 2 ປີ

ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ

# ເອກະສານທີ່ຕ້ອງກະກຽມ

1. ໃບສະເໜີ ຂໍຢັ້ງຢືນແບບຟາມດຽວ
2. ຂໍ້ຕົກລົງຂໍການຢັ້ງຢືນກະສິກຳອິນຊີ (ໃບສັນຍາຂໍການຢັ້ງຢືນກະສິກຳອິນຊີ)
3. ແບບຟອມ ການສະໝັກພື້ນທີ່ການຜະລິດ ເພື່ອຂໍການຢັ້ງຢືນກະສິກຳອິນຊີ
4. ເອກະສານທີ່ຕ້ອງປະກອບນອກຈາກແບບຟອມມີ:

4.1 ແຜນທີ່ສວນ ຫຼື ຟາມ ທີ່ສາມາດບອກທາງໄປຫາສວນ ແລະ ຂອບເຂດຂອງຟາມຕົນເອງ

4.2 ແຜນວາດສວນຫຼືຟາມ ທີ່ບົ່ງບອກເຖິງທຸກຈຸດທີ່ສຳຄັນພາຍໃນ ເຊັ່ນ: ແປງປູກ, ເຮືອນເຮັດຝຸ່ນ, ບ່ອນຢູ່, ບ່ອນເກັບນ້ຳ, ໂຮງເຮືອນບ່ອນເກັບມ້ຽນເຄື່ອງມື, ບ່ອນລ້າງຜົນຜະລິດ, ບ່ອນຢູ່, ….

4.3 ແຜນການຜະລິດປະຈຳປີ ທີ່ລະບຸງວດ, ໄລຍະເວລາ, ປີ, ຊະນິດພືດ, ຄາດຄະເນຜົນຜະລິດ ເປັນຕົ້ນ

4.4 ລະບຽບ ຫຼື ຂໍ້ກຳນົດຕ່າງໆ ແລະ ຂໍ້ມູນດ້ານວິຊາການ ທີ່ໃຊ້ພາຍໃນສວນ

4.5 ລາຍການຂອງຝຸ່ນ, ຢາ, ຂາເຂົ້າປັດໃຈການຜະລິດ

4.6 ແບບຟອມການບັນທຶກທີ່ໃຊ້ໃນສວນ ຫຼື ຟາມ (ບັນທຶກການປູກ, ການໃສ່ຝຸ່ນ, ການເຮັດຝຸ່ນ, ການເກັບກ່ຽວ, ການປຸງແຕ່ງ ຫຼື ແປຮູບ, ການຂາຍ, ບົດສະຫຼຸບສັງລວມ ແລະ ແບບຟອມອື່ນໆ ທີ່ໃຊ້

4.7 ໃບທະບຽນວິສາຫະກິດ/ໃບອະນຸຍາດດຳເນີນທຸລະກິດ

4.8 ໃບຢັ້ງຢືນການນຳໃຊ້ພື້ນທີ່ (ໃບຕາດິນ ຫຼື ໃບສັນຍາເຊົ່າ ຫຼື ສັນຍາສຳປະທານ ທີ່ດິນ)

# ເອກະສານທີ່ຕ້ອງກະກຽມ

| ລາຍການແບບຟອມ |
| --- |
| |
| 1. ໃບສະເໜີ ຂໍການຢັ້ງຢືນແບບກຸ່ມ |
| 2. ຂໍ້ຕົກລົງຂໍການຢັ້ງຢືນກະສິກຳອິນຊີ (ໃບສັນຍາຂໍການຢັ້ງຢືນກະສິກຳອິນຊີ) |
| 3. ແບບຟອມ ການສະໝັກພື້ນທີ່ການຜະລິດ ເພື່ອຂໍການຢັ້ງຢືນກະສິກຳອິນຊີ |
| 4. ລາຍລະອຽດຂອງສະມາຊິກກຸ່ມ (Grower List) |
| 5. ເອກະສານທີ່ຕ້ອງປະກອບນອກຈາກແບບຟອມມີ: |
| 5.1 ແຜນທີ່ສວນ ຫຼື ກຸ່ມ ທີ່ສາມາດບອກທາງໄປຫາກຸ່ມ ແລະ ຂອບເຂດຂອງກຸ່ມຕົນເອງ |
| 5.2 ແຜນວາດລວມຂອງສວນ ຫຼື ຟາມ ຂອງສະມາຊິກພາຍໃນກຸ່ມ |
| 5.3 ແຜນການຜະລິດປະຈຳປີ ທີ່ລະບຸງວດ, ໄລຍະເວລາ, ປີ, ຊະນິດພືດ, ຄາດຄະເນຜົນຜະລິດ ເປັນຕົ້ນ |
| 5.4 ປື້ມຄູ່ມື ລະບົບຄວບຄຸມພາຍໃນກຸ່ມ |
| 5.5 ລະບຽບ ຫຼື ຂໍ້ກຳນົດຕ່າງໆ ແລະ ຂໍ້ມູນດ້ານວິຊາການ ທີ່ໃຊ້ພາຍໃນກຸ່ມ |
| 5.6 ລາຍການຂອງຝຸ່ນ, ຢາ, ຂາເຂົ້າປັດໃຈການຜະລິດ |
| 5.7 ແບບຟອມການບັນທຶກທີ່ໃຊ້ໃນກຸ່ມ, ສວນ ຫຼື ຟາມ ຂອງສະມາຊິກ (ບັນທຶກການປູກ, ການໃສ່ຝຸ່ນ, ການເຮັດຝຸ່ນ, ການເກັບກ່ຽວ, ການປຸງແຕ່ງ ຫຼື ແປຮູບ, ການຂາຍ , ບົດສະຫຼຸບສັງລວມ ແລະ ແບບຟອມອື່ນໆ ທີ່ໃຊ້ |
| 5.8 ຂໍ້ຕົກລົງຂອງການສ້າງຕັ້ງກຸ່ມ |
| 5.9 ໂຄງຮ່າງການຈັດຕັ້ງຂອງກຸ່ມ |
| 5.10 ໃບຢັ້ງຢືນການນຳໃຊ້ພື້ນທີ່ (ໃບຕາດິນ ຫຼື ໃບສັນຍາເຊົ່າ ຫຼື ສັນຍາສຳປະທານ ທີ່ດິນ) |
| 5.11 ເອກະສານອື່ນໆ ທີ່ໄດ້ນຳໃຊ້ພາຍໃນກຸ່ມ ຫຼື ເປັນຮ່າງແບບຟອມທີ່ຈະນຳໃຊ້ |

# ສິ່ງທີ່ຄວນເອົາໃຈໃສ່ໃນການຂໍຢັ້ງຢືນ ແລະ ຮັກສາໃບຢັ້ງຢືນ

- ສຳຫຼັບຊາວກະສິກອນ ( ມາດຖານການປູກຝັງ, ລະບຽບ...)

- ກຽມຄວາມພ້ອມ: ສຶກສາມາດຕະຖານ, ການຜະລິດຕາມມາດຕະຖານ, ການຈົດບັນທຶກ, ປະກອບແບບຟອມສະໝັກ ແລະ ຕໍ່ອາຍຸ (ກ່ອນໝົດອາຍຸໃບຢັ້ງຢືນ 60 ວັນ)

- ສຳຫຼັບສວນຂະໜາດນ້ອຍ-ກາງ ແລະ ໃຫຍ່:

- ກຽມຄວາມພ້ອມ: ສຶກສາມາດຕະຖານ, ການຜະລິດຕາມມາດຕະຖານ, ການຈົດບັນທຶກ, ປະກອບແບບຟອມສະໝັກ ແລະ ຕໍ່ອາຍຸ (ກ່ອນໝົດອາຍຸໃບຢັ້ງຢືນ 60 ວັນ)

- ສຳຫຼັບບໍລິສັດ:

- ສຶກສາມາດຕະຖານ, ການຜະລິດຕາມມາດຕະຖານ, ການຈົດບັນທຶກ, ປະກອບແບບຟອມສະໝັກ ແລະ ຕໍ່ອາຍຸ (ກ່ອນໝົດອາຍຸໃບຢັ້ງຢືນ 60 ວັນ)

- ສິ່ງອອກ:

- ກຽມຄວາມພ້ອມ: ການຜະລິດຕາມມາດຕະຖານ, ການຈົດບັນທຶກ, ປະກອບແບບຟອມສະໝັກ ແລະ ຕໍ່ອາຍຸ (ກ່ອນໝົດອາຍຸໃບຢັ້ງຢືນ 60 ວັນ)

# ຄ່າໃຊ້ຈ່າຍ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ກົມປູກຝັງ

ເລກທີ 1222/ກປຝ

ນະຄອນຫຼວງວຽງຈັນ, ວັນທີ 13 JUL 2021

## ແຈ້ງການ

ເຖິງ: - ພະແນກການປູກຝັງທຸກແຂວງທົ່ວປະເທດ

- ຜູ້ຜະລິດ, ກຸ່ມຜູ້ຜະລິດ, ບໍລິສັດຜະລິດ ແລະ ຜູ້ປະກອບການ

ເລື່ອງ: ການເກັບຄ່າທຳນຽມ ແລະ ຄ່າບໍລິການວິຊາການຂອງການກວດກາ ແລະ ການຢັ້ງຢືນ ຕາມມາດຕະຖານກະສິກຳອິນຊີ ແລະ ກະສິກຳທີ່ດີ.

- ອີງຕາມ ລັດຖະບັນຍັດ ຂອງປະທານປະເທດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ວ່າດ້ວຍ ຄ່າທຳນຽມ ແລະ ຄ່າບໍລິການ, ສະບັບເລກທີ 002/ປປທ, ລົງວັນທີ 17.06.2021;
- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມປູກຝັງ, ສະບັບເລກທີ 3825/ກປ, ລົງວັນທີ 18 ສິງຫາ 2017;

ເພື່ອຈັດໃຫ້ ການເກັບຄ່າທຳນຽມ ແລະ ຄ່າບໍລິການວິຊາການ ຂອງການກວດກາ ແລະ ການຢັ້ງຢືນ ກະສິກຳອິນຊີ ແລະ ກະສິກຳທີ່ດີ ໃຫ້ສອດຄ່ອງຕາມລະບຽບຫຼັກການ ທີ່ກຳນົດໄວ້ ໃນລັດຖະບັນຍັດຂອງປະທານປະເທດ ສະບັບເລກທີ 002/ປປທ, ລົງວັນທີ 17.06.2021 ແລະ ເປັນເອກະພາບ ໃນການເກັບແຜນງົບປະມານໃນການລົງກວດກາ ແລະ ການຢັ້ງຢືນ, ກົມປູກຝັງ ຈຶ່ງອອກແຈ້ງການ ກ່ຽວກັບການກຳນົດຄ່າທຳນຽມ ແລະ ຄ່າບໍລິການວິຊາການ ຂອງການກວດກາ ແລະ ການຢັ້ງຢືນ ດັ່ງນີ້:

1. ຄ່າທຳນຽມການອອກໃບຢັ້ງຢືນກະສິກຳອິນຊີ ແລະ ກະສິກຳທີ່ດີ ໃຫ້ເກັບດັ່ງນີ້:

| ລ/ດ | ລາຍການ | ຫົວໜ່ວຍ | ອັດຕາ (ກີບ) |
|---|---|---|---|
| 1.1 | ໃບຢັ້ງຢືນມາດຕະຖານກະສິກຳອິນຊີ ແລະ ມາດຕະຖານກະສິກຳທີ່ດີ (ສະໝັກໃໝ່) | ໃບ | 50,000 |
| 1.2 | ໃບຢັ້ງຢືນຕໍ່ອາຍຸມາດຕະຖານກະສິກຳອິນຊີ ແລະ ມາດຕະຖານກະສິກຳທີ່ດີ | ໃບ | 50,000 |
| 1.3 | ໃບຢັ້ງຢືນຝຸ່ນອິນຊີ ທີ່ໃຊ້ໃນພື້ນທີ່ຂໍການຢັ້ງຢືນຕາມມາດຕະຖານກະສິກຳອິນຊີ | ໃບ | 50,000 |

1

2. ຄ່າບໍລິການກວດກາກິດຈະການກະສິກຳອິນຊີ ແລະ ກະສິກຳທີ່ດີ ພ້ອມໃບຢັ້ງຢືນ ໃຫ້ເກັບດັ່ງນີ້:

| ລ/ດ | ລາຍການ | ຫົວໜ່ວຍ | ອັດຕາ (ກີບ) |
|---|---|---|---|
| 1.1 | ຮວບຮວມ, ຄົ້ນຄວ້າ ແລະ ປະເມີນຜົນ ແລະ ກະກຽມເອກະສານ ເພື່ອລົງກວດກາພື້ນທີ່ | ຄັ້ງ | 250,000 |
| 1.2 | ຮວບຮວມ, ຄົ້ນຄວ້າ ແລະ ປະເມີນ ແລະ ຂຽນບົດລາຍງານສະເໜີຄະນະກຳມະການພິຈາລະນາອອກໃບຢັ້ງຢືນ | ຄັ້ງ | 250,000 |
| 1.3 | ການລົງກວດກາພື້ນທີ່ການຜະລິດ ແລະ ຜູ້ປະກອບການຕາມມາດຕະຖານກະສິກຳທີ່ດີ (GAP) ແລະ ມາດຕະຖານກະສິກຳອິນຊີ (OA) | ວັນ/ຄົນ | 250,000 |

3. ຄ່າໃຊ້ຈ່າຍໃນການເດີນທາງ, ອັດຕາກິນຢູ່ພັກເຊົາ ແມ່ນບໍ່ລວມໃນຄ່າທຳນຽມ ແລະ ຄ່າບໍລິການ, ພະແນກມາດຕະຖານ, ກົມປູກຝັງ ແມ່ນຈະມີການຄິດໄລ່ຕາມຕົວຈິງໃນມື້ລົງເຮັດວຽກ ໂດຍອີງຕາມຂໍ້ຕົກລົງວ່າດ້ວຍກຳນົດໝາຍການໃຊ້ຈ່າຍງົບປະມານບໍລິຫານຂອງລັດ, ສະບັບເລກທີ 4000/ກງ, ລົງວັນທີ 12 ທັນວາ 2018.
4. ສຳລັບວິທີການຄິດໄລ່ແຜນການລົງກວດກາ, ວິທີການກຳນົດຈຳນວນສະມາຊິກກຸ່ມ ຫຼື ໂຄງການ ແມ່ນພະແນກມາດຕະຖານ ຈະດຳເນີນການຄິດໄລ່ ຕາມລະບອບການຢັ້ງຢືນຕາມມາດຕະຖານກະສິກຳອິນຊີ ແລະ ກະສິກຳທີ່ດີ.

ດັ່ງນັ້ນ, ຈຶ່ງແຈ້ງການມາຍັງ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຮັບຊາບ ແລະ ຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ.

ຫົວໜ້າກົມປູກຝັງ

ຈັນທາ ທິບພະວົງພັນ

ບ່ອນສົ່ງ
- ພະແນກມາດຕະຖານ 1 ສະບັບ (ເພື່ອຊາບ ແລະ ຈັດຕັ້ງປະຕິບັດ)
- ພະແນກ ແຜນການ ແລະ ຮ່ວມມື 1 ສະບັບ (ເພື່ອຊາບ)
- ພະແນກບໍລິຫານ ແລະ ຈັດຕັ້ງ 1 ສະບັບ (ເພື່ອຊາບ)
- ພະແນກປູກຝັງທົ່ວປະເທດ 1 ສະບັບ (ເພື່ອຊາບ)

2

# ຄ່າໃຊ້ຈ່າຍ

- ອີງຕາມ ລັດຖະບັນຍັດ ຂອງປະທານປະເທດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ວ່າດ້ວຍ ຄ່າທຳນຽມ ແລະ ຄ່າບໍລິການ, ສະບັບເລກທີ 002/ປປທ, ລົງວັນທີ 17.06.2021ອະທິບາຍ ເລື່ອງຄ່າໃຊ້ຈ່າຍຕ່າງໆທີ່ຈຳເປັນ.

| ລ/ດ | ລາຍການ ຄ່າທຳນຽມ | ຫົວໜ່ວຍ | ອັດຕາ (ກີບ) |
|---|---|---|---|
| 1 | ໃບຢັ້ງຢືນມາດຕະຖານກະສິກຳອິນຊີ ແລະ ມາດຕະ ຖານກະສິກຳທີ່ດີ (ສະໝັກໃໝ່) | ໃບ | 50,000 |
| 2 | ໃບຢັ້ງຢືນຂໍຕໍ່ອາຍຸມາດຕະຖານກະສິກຳອິນຊີ ແລະ ມາດຕະຖານກະສິກຳທີ່ດີ | ໃບ | 50,000 |
| 3 | ໃບຢັ້ງຢືນຝຸ່ນອິນຊີ ທີ່ໃຊ້ໃນພື້ນທີ່ຂໍການຢັ້ງຢືນຕາມມາດຕະຖານກະສິກຳອິນຊີ | ໃບ | 50,000 |

# ຄ່າໃຊ້ຈ່າຍ

- ຄ່າບໍລິການ

| ລ/ດ | ລາຍການ | ຫົວໜ່ວຍ | ອັດຕາ (ກີບ) |
|---|---|---|---|
| 1 | ສັງລວມ, ຄົ້ນຄວ້າ ແລະ ປະເມີນຜົນ ແລະ ກະກຽມເອກະສານ ເພື່ອລົງກວດກາພື້ນທີ່ | ຄັ້ງ | 250,000 |
| 3 | ສັງລວມ, ຄົ້ນຄວ້າ ແລະ ປະເມີນ ແລະ ຂຽນບົດລາຍງານສະເໜີ ຕໍ່ຄະນະກໍາມະການພິຈາລະນາອອກໃບຢັ້ງຢືນ | ຄັ້ງ | 250,000 |
| 4 | ການລົງກວດກາພື້ນທີ່ການຜະລິດ ແລະ ຜູ້ປະກອບການ ຕາມມາດຕະຖານກະສິກໍາທີ່ດີ (GAP) ແລະ ມາດຕະຖານກະສິກໍາອິນຊີ (OA) | ວັນ/ຄົນ | 250,000 |

- ຄ່າໃຊ້ຈ່າຍໃນການເດີນທາງ,ກິນຢູ່ພັກເຊົາ ແມ່ນບໍ່ລວມໃນຄ່າທໍານຽມ ແລະ ຄ່າບໍລິການ, ຈະມີການຄິດໄລ່ຕາມຕົວຈິງໃນມື້ລົງເຮັດວຽກ.

# ຜົນປະໂຫຍດຂອງການອອກໃບຢັ້ງຢືນ

- ນະໂຍບາຍຂອງພາກລັດຕໍ່ວຽກງານກະສິກຳອິນຊີ.
- ສົ່ງເສີມໃຫ້ມີການຜະລິດກະສິກຳອິນຊີ
- ມີມາດຕະຖານ, ລະບົບການຢັ້ງຢືນ
- ມີບັນດາໂຄງການ ໃນການສົ່ງເສີມໃຫ້ເຮັດການຜະລິດກະສິກຳອິນຊີ ເຊັ່ນ: ເຕັກນິກການຜະລິດ, ການເຂົ້າເຖິງແຫຼ່ງທຶນ,…

- ດ້ານຜູ້ຜະລິດ: ການເຂົ້າເຖິງຕະຫຼາດ
- ຜູ້ບໍລິໂພກ: ຜົນຜະລິດປອດໄພ

ຂໍຂອບໃຈ